ໂວຫານຂອງນັກປາດເກົ່າ ເອົາມາເລົ່າໃໝ່ສູ່ກັນຟັງ

ອັນຄວາມມານະ ພະຍາຍາມ
ປະກອບການງານ ໃນເບື້ອງຕົ້ນ
ມັນອົມຂົມຂື່ນເຫຼືອເກີນ ແຕ່ມັນຫວານ
ສົດຊື່ນຕໍ່ພາຍຫຼັງ ເມື່ອງານນັ້ນສຳເຣັດ
(ວິຣິເຍນະ ທຸກຂະມັດເຈຕິ : ຄົນຫຼຸດລ່ວງທຸກໄດ້ເພາະຄວາມພຽນ)

ເມື່ອຂັຸພມາກ ຫຼາກມາ ປັນຍາຊ່ວຍ
ຄົນທີ່ປ່ວຍ ກໍຫາຍ ໝາຍກໍຮັກ
ຖ້າໄຮ້ຂັຸພ ອັນປັນຍາ ຊະຕາພັກ
ປ່ວຍກໍໜັກ ຮັກກໍຫາຍ ຄ່ອຍຄາຍລົງ

ສິ່ງໃດ ບໍ່ບໍຣິສຸດ ທຸຈຣິດ
ຢ່າມີ ຈິດຍິນດີ ວ່າມີຜົນ
ເຖິງໄດ້ ກໍຄວນສູ້ ອົດທົນ
ເກີດເປັນຄົນ ບໍ່ມີໃຜ ຈະບໍ່ຕາຍ

ຄົນທຸຈຣິດ ໄດ້ຍິນສຽງເຄາະປະຕູ ສະດຸ້ງທຸກທີ

ທີ່ແຄບ ບໍ່ເປັນຫຍັງ ຢ່າໃຈແຄບ ກໍແລ້ວກັນ

ທີ່ກວ້າງສັກປານໃດ ບໍ່ສຳຄັນເທົ່າໃຈກວ້າງ

ເມັຽຊົ່ວຈິງ ນິ້ງໄວ້ ຢູ່ໃນອົກ
ຢ່າຢິບຍົກ ຂຍາຍ ໃຫ້ຫຼາຍຫູ
ເໝືອນການກິດ ຜິດໄດ້ ໄວ້ເປັນຄຣູ
ໃຫ້ເຂົາຮູ້ ເຮົ້າງໄປ ໄຮ້ຜົນເອີຍ

ແມ່ຕາຍ ແທນລູກໄດ້ ແຕ່ລູກຂ້າແມ່ໄດ້

ເຈົ້າໂລກຕາຍແລ້ວ ກໍເໝົ່າເໝືອນກັນ ກັບຄົນຂໍທານ

ການຫ້າມໃຈ ເປັນນິໃສ ຂອງປວງປາດ
ທ່ານສາມາດ ໝ່ຽວຈິດ ທີ່ຄິດບ້າ
ໃຫ້ຄືນກັບ ສູ່ຄອງ ຂອງປັນຍາ
ຈຶ່ງຈະພາ ສຸກທະວີ ມີແກ່ຕົນ ຈົນປັນຍາ

ເງິນ ... ຊື້ຄວາມຮັກບໍ່ໄດ້ ແຕ່ ... ຊື້ຜູ້ຍິງໄດ້

ຈະມີຄູ ກໍຈົ່ງຮູ້ ປະຕິບັດ
ຈົ່ງຊື່ສັດ ສຸຈຣິດ ຈິດຖນອມ
ຢ່າຄິດຮ້າຍ ຍ້າຍແຍກ ທຳແປກປອມ
ມະໂນນ້ອມ ສເນ່ຫາ ໃນສາມີ

ເກີດເປັນຍິງ ກໍໃຫ້ເຫັນ ວ່າຍິງ
ຢ່າທອດຖິ້ມ ກິຣິຍາ ອັດຊາໃສ
ເປັນຍິງເຄິ່ງ ຊາຍເຄິ່ງ ຢ່າເໝິງໃຈ
ໃຜເຂົາບໍ່ ສັນຣະເສີນ ເມີນອາຣົມ

ການກະວົນກະວາຍຄືອາການຂອງຄົນ ຄວບຄຸມຕົວເອງບໍ່ໄດ້

ຄົນທີ່ເປັນໜີ້ ເປັນຄົນຍາກຈົນທີ່ສຸດ ຂອງທີ່ສຸດ

ເງິນກັບງານ ການສຶກສາ ຕ້ອງຫາກ່ອນ
ຢ່າຣີບຮ້ອນ ໄປຫາຮັກ ງານຈະເສັຽ
ຖ້າຂາດເງິນ ຂາດງານ ພານຂາດເມັຽ
ງານບໍ່ເສັຽ ເງິນຄົງມີ ເມັຽຄົງມາ

ໂປຣດຈຳໄວ້ວ່າ ບໍ່ມີຜູ້ໃດ
ຫາທະນາສຄວາມ ໄປຊ່ວຍໄດ້ໃນນະຣົກ
ເມື່ອພຣະເຈົ້າຕັດສິນ ທະນາຍຄວາມກໍຊ່ວຍຕົນເອງບໍ່ໄດ້
ຜູ້ພິພາກສາ ເປັນຈຳເລີຍໃນເມືອງນະຣົກກໍມີ

ໂລກ ... ບໍ່ສົນໃຈທ່ານ ຈົ່ນກ່ວາທ່ານ ຈະສົນໃຈໂລກ

ຄວາມເປັນເສດຖີ ຂອງລູກເສດຖີ ບໍ່ມີຄວາມສໍາຄັນ
ອັນໃດ ການທໍາທຸກຢ່າງເໝືອນເສດຖີ ທໍາໃຫ້ເປັນເສດຖີບໍ່ໄດ້

ບິດາມານດາທີ່ປະເສີດ ຄືຜູ້ທີ່ລູກຮັກ ແລະເກງກົວ

ຄວາມກ້າໃນເວລາຮ້າຍ ຄືຄວາມບ້າ ບໍ່ແມ່ນຄວາມກ້າ
ຄວາມຮ້າຍຄືປີສາດ ຊອບສິງ ຢູ່ໃນຄົນໂງ່
ເມື່ອຫາຍຮ້າຍແລ້ວ ກໍເປັນຄົນ ຢ່າງເດີມ

ຄົນບໍ່ມີຄວາມຮູ້ ຊອບສະແດງໃຫ້ຄົນທັງຫຼາຍ
ເຂົ້າໃຈວ່າ ຕົນມີຄວາມຢູ້

ສິ່ງທີ່ທ່ານຂໍຢືມນັ້ນ ມັນມາພ້ອມ ກັບຄວາມເສັຽໃຈ
ຄົນທີ່ດີອົກດີໃຈນັ້ນ ບໍ່ແມ່ນຄົນ ທີ່ໃຫ້ຢືມ
ຢືມກັນໄປຢືມກັນມາ ຍ່ອມນໍາມາ ຊຶ່ງຄວາມບາດໝາງ

ຈົ່ງຮຽນເພື່ອຮູ້ ຈົ່ງດູເພື່ອຈໍາ
ຈົ່ງທໍາເພື່ອຊໍານານ ຈົ່ງທໍາດຽວນີ້
ວິນາທີ່ຂ້າງໜ້າ ອາດບໍ່ໄດ້ທໍາ

ທ່ານບໍ່ສົນໃຈ ກັບຄວາມຍາກຈົນ
ຄວາມຍາກຈົນ ຈະສົນໃຈກັບທ່ານ
ຖ້າທ່ານບໍ່ຂັບໄຫຼ່ ຄວາມຍາກຈົນ
ຄວາມຍາກຈົນ ກໍຈະຢູ່ກັບທ່ານ

ຈົ່ງຍິນດີຮັບຟັງ ຄວາມຄິດຄວາມເຫັນຂອງຜູ້ອື່ນ ແລະ ພິຈາຣະນາ

ຄົນທີ່ໄວ້ໃຈບໍ່ໄດ້ ຍິ່ງກ່ວາຜູ້ໃດໃນໂລກ ຄືຕົວທ່ານເອງ

ຄິດຫຼືບໍ່ ເຮົານີ້ ດີຫຼືຊົ່ວ
ເບິ່ງໃຫ້ທົ່ວ ທຽບທັມ ຄຳພຣະສອນ
ແມ່ນມີດີ ຮັກສາໄວ້ ໃຫ້ຖາວອນ
ຊົ່ວບັ່ນທອນ ຢ່າໃຫ້ເຫຼືອ ເພື່ອສ້າງດີ

ໂລກ ... ຄືໂຮງແຮມ ບໍ່ຍອມໃຫ້ຜູ້ໃດ ຢູ່ເກີນເວລາກຳນົດໄວ້

ອ່ານບໍ່ຈົບ ກໍຮູ້ເຣື້ອງບໍ່ໝົດ
ຢ່າອ່ານແຕ່ໜັງສື ຈົ່ງອ່ານຕົວທ່ານດ້ວຍ

ກະຈົກສ່ອງ ມອງດູ ຈະເຫັນໜ້າ
ປັນຍາສ່ອງ ປັນຍາຈະແຈ່ມໃສ
ຕົວເບິ່ງຕົວ ຊົ່ວດີ ມ່ພຽງໃດ
ບໍ່ຕ້ອງໄປຫາ ໝໍດູ ກໍຮູ້ດີ

ອ່ານຕົວອອກ ບອກຕົວໄດ້
ໃຊ້ຕົວເປັນ ເຫັນທາງອະຣິຍະ

ມີເມັຽດີ ເໝືອນມີຊັພ ນັບລ້ານລ້ານ
ຕັ້ງຫຼັກຖານ ໝັ້ນຄົງ ຊ່ຊຍສົ່ງເສີມ
ມີເມັຽຊົ່ວ ມົວໝອງ ຝານຂອງເດີ້ມ
ທຸກຊ້ຳເຕີມ ຕົວຈິບຫາຍ ຂາຍໜ້າຄົນ

ຢາກໄປນິພພານ ໃຫ້ຂ້າພໍ່ຕີແມ່
ຢາກໃຫ້ພີ່ນ້ອງມາແວ່ ໃຫ້ຂ້າພວກດຽວກັນ
ຢາກໄປສວັນ ໃຫ້ໄປປີດສີ້ນໃນວັດ

ຄົນເຄິ່ງໂງ່ ເຄິ່ງສລາດ ປົກຄອງຍາກ
ຄົນໂງ່ຈິງ ສລາດຈິງ ປົກຄອງງ່າຍ

ຖ້າຮັກຝັ່ງຊັ່ງ ກໍຝາກ ໃນຮັກດ້ວຍ
ຖ້າຮັກນ້ອຍ ເຫັນຊັ່ງ ດັ່ງພູຜາ
ບໍ່ແມ່ນງາ ຢ່າໄປຄົ້ນ ມັນເອົາງາ
ຄ່າປູ່ຫາ ໂລຫິດ ຜິດໂບຮານ

ເກີດເປັນຄົນ ຈະທົນສູ້ ຢູ່ເທົ່າໃດ
ຕາຍທີ່ໃດ ໃຫ້ເອົາຊົມ ສົມແກ່ນາມ
ຈື່ງຈະງາມ ໜ້າຮັກ ສັກຂອງຕົວ

ສິ່ງຂອງ ຂອງຜູ້ອື່ນ ຈົ່ງຖຸນອມ
ຍິ່ງກ່ວາ ສິ່ງຂອງ ຂອງທ່ານເອງ

ເຖິງແມ່ນ ບໍ່ມີບຸນງາມ ຄວາມດີ
ຖ້າມີເງິນ ກໍເປັນຄົນ ດີໄດ້
ແຕ່ເງິນນັ້ນ ກັບໃຫ້ຄົນ ເປັນຄົນຊົ່ວກໍໄດ້

ຂອງທ່ານມີ ເກັບໄວ້
ເປັນທີ່ໃຊ້ ກໍງ່າຍ
ຫາຍກໍຮູ້ ດູກໍງາມຕາ

ແມ່ນຜົວເດືອດ ເຈົ້າຈົ່ງດັບ ຣະວັງໄວ້
ຢ່າພໍໃຈ ຂຶ້ນສຽງ ຖຽງປະສົມ
ເຂົາເປັນໄຟ ເຮົາເປັນນ້ຳ ພ້ຳພົມ
ແມ່ນຣະດົມ ຂຶ້ນທາງຄູ່ ຈະວູບວາບ ເຜົາລົນຕົນ

ຊາດໃດ ... ບໍ່ຈັດສັນອາຫານ ສນອງໃຫ້ພົລເມືອງຊາດນັ້ນ ... ບໍ່ກ້າວໜ້າ

ເວລາ ຄືຊີວິດ
ເວລາ ພາຊີວິດ ໄປດ້ວຍ
ເວລາ ຍິ່ງຫຼາຍ ຊີວິດ ກໍນ້ອຍເຂົ້າ
ເວລາ ໝົດໄປ ຊີວິດກໍໝົດໄປ

ມະນຸດ ຄືສັດແຫ່ງການຕໍ່ສູ້
ສູ້ກັນ ທຸກຄອບຄົວ
ສູ້ກັນ ທົ່ວໂລກ

ດີຂ້າງໃນ ໃຈສະອາດ ປາດກ່າວວ່າ
ດີໜັກໜາ ດີແທ້ ບໍ່ແປຜັນ
ຜີ່ວາ ຢາກມີດີໃນ ໃຫ້ດ້ອຍກັນ
ຣິບສ້າງສັນ ພຸດທະທັມ ປະຈຳໃຈ

ຜູ້ມີສີລ ບໍ່ມີຄວາມລັບ ຢູ່ພາຍໃນໃຈ

ກ່ອນແຕ່ງງານ ຈິ່ງເປີດຫູສອງຂ້າງ
ແຕ່ງງານແລ້ວ ຈິ່ງອັດຫູຂ້າງໜຶ່ງ

ອັນສົມບັດ ສິ່ງໃດໃດໃນໂລກ
ອັນສາມີດີ ກ່ວາສິ່ງທັງປວງ
ອີກບຸດຕາບຸດຕີ ເປັນທີ່ປ້ອງ
ຍິ່ງກ່ວາເງິນ ກ່ວາທອງ
ຂອງໃດໃດ ນີ້ໂລກສົມມຸດ
ໂບຮານທ່ານວ່າ ມີສາມີພັນຣະຍາ
ບຸດຕີບຸດຕາ ຢ່າວ່າມີໂຊກ
ເຄາະສະເດາະບໍ່ຕົກ ທ່ານວ່າດັ່ງນີ້

ຕູ້ເອີ້ຍຕູ້ ຕູ້ຕາດີ
ຈູງຕູ້ ຕາບອດ
ຈູງບໍ່ລອດ ຕູ້ຕາບອດ
ຊິຈູງເຈົ້າ ຕູ້ຕາດີ

ຜູ້ມີສິນ ຢູ່ໃນຫ້ອງມືດແຕ່ຜູ້ດຽວ ກໍເໝືອນຢູ່
ກາງແຈ້ງ ຕໍ່ໜ້າແຂກ ຕັ້ງຮ້ອຍຕັ້ງພັນ

ສົມບັດຂອງຄົນໂງ່ມີຢູ່ ໕ ຢ່າງ :
໑. ໄປຮັກຜູ້ອື່ນ ຫຼາຍກວາຕົວ
໒. ຄວາມຮູ້ຖ່ວມຫົວ ເອົາຕົວບໍ່ລອດ
໓. ມີສົມບັດແລ້ວບໍ່ເຮັດບຸນໃຫ້ທານ ເຈືອຈານແກ່ຜູ້ອື່ນ
໔. ໄປເມົາມົວນໍາແຕ່ສິ່ງ ບໍ່ເປັນປະໂຍດ
໕. ເດີນທາງຖືກແລ້ວ ໄປເດີນທາງຜິດ

ອັນເບັ້ຽຟື່ນ ກິນສຸຣາເຫຼົ້າ
ມັກພາເດີນ ໄປຫາທີ່ຍາກຈົນ
ເຫັນປະຈັກ ຈົນໂຊຊຸບຮູບກາຍ
ຈ່ອຍຜອມເຫຼືອງ ໃຜພົບພັກ
ແທບບໍ່ຮູ້ ວ່າຜູ້ດີ

ຊາຍຊະລາ ມີເມັຽສາວ ຕ້ອງໝັດເມື່ອຍ
ເພາະພະຍາຍາມ ທໍາເໝືອນ ຢ່າງຄົນໜຸ່ມ

ເພັຊ ... ເປັນສິ່ງທີ່ມີຄ່າ ກໍເພາະມະນຸດສົມບັດ ໃຫ້ມັນເປັນຢ່າງນັ້ນ
ເຄາະດີທີ່ສຸດທີ່ມະນຸດ ບໍ່ສົມມຸດໃຫ້ກະດູກ ... ຂອງມະນຸດ ມີຄ່າເທົ່າກັບເພັຊ

ຈະດູຍາດ ກໍເມື່ອຍາກ ປາດາກເສັ້ຽ
ຈະດູເມັຽ ກໍເມື່ອໄຂ້ ໄກ້ອາສັນ
ຈະດູຂ້າ ກໍເມື່ອໜ້າ ງານໜັກ
ນັ້ນຈະເຫັນ ຖ້ວນທົ່ວ ວ່າຊົ່ວດີ

ຊັພທີ່ມີ ຄວນແບ່ງໄວ້ ໕ ສ່ວນ :
໑. ສ່ວນໃຊ້ໜີ້ເກົ່າ ເທົ່າວັນຕາຍ
໒. ຝັງດິນໄວ້ ໃຫ້ເພີ້ມພູນ
໓. ຖິ້ມລົງເຫວລຶກ ບໍ່ຮູ້ຈັກຕົ້ນ
໔. ໃສ່ປາກງູເຫົ່າງູສາ ເປັນຢາດັບພິສ
໕. ໃຫ້ເຂົາຢືມເພື່ອເອົາຜົນກໍາໄຣ ໃຊ້ແທນຄືນ

ຖ້າໂງ່ບໍ່ເປັນ ກໍເປັນໃຫຍ່ຍາກ

ງາມສວຍເກ່ລວຍ
ຄົນຈະງາມ ງາມນ້ຳໃຈ ບໍ່ແມ່ນງາມໃບໜ້າ
ຄົນຈະສວຍ ສວຍຈັນຍາ ບໍ່ແມ່ນຕາຫວານ
ຄົນຈະເກ່ ເກ່ຄວາມຮູ້ ບໍ່ແມ່ນຢູ່ຫຼາຍປີ
ຄົນຈະລວຍ ລວຍສິນທັມ ບໍ່ແມ່ນອາຄານຮ້ານຫ້າງໃຫຍ່

ຍາກຫຍຸ້ງຫຍັ້ງ ເພາະຄວາຍ ຝໍ ໂຕ
ພາໃຫ້ນ້ອງ ດຶງຈ່ອງ
ຕົວ ໜຶ່ງ ຕິດງ່າ ຄອງ
ຕົວ ສອງ ຕິດງ່າ ຂາມ
ຕົວ ສາມ ຕິດງ່າ ມີ້
ຕົວ ສີ່ ຕິດງ່າ ຫວ້າ
ຕົວ ຫ້າ ຕິດງ່າ ບົກ
ຕົວ ຫົກ ຕິດງ່າ ແຕ້
ໃຜຊິມາຊ່ວຍແກ້ ຄວາຍນ້ອງຈຶ່ງຊິໄປ

ພາຍແມ່ພາຍ ຕາສາຍ ສາຍຕລາດຈະຫາຍ
ສາຍບົວຈະເໜົ່າ ໂສ້ບໍ່ເກ່ ກະແຈບໍ່ໄຂ
ຈັ່ງໃດ ຈຶ່ງຈະພາຍໄປໃຫວ ຍາແມ່ເອີຍ

ຄົນມີປັນຍາ ຕ້ອງໄຊ້ຄວາມໂງ່ ຄວາມສລາດໄດ້
ບໍ່ຍອມໃຫ້ ຄວາມໂງ່ຄວາມສລາດ ໄຊ້ຕົນ

ປົກຄອງຄົນໂງ່ ດ້ວຍອຳນາດ
ປົກຄອງຄົນສລາດ ດ້ວຍຍຸຕິທັມ

ອ່ານບໍ່ສຸດ ກໍຮູ້ເຣື້ອງ ບໍ່ໝົດ
ອ່ານໃຫ້ສຸດ ແລ້ວຢຸດ ພິຈາຣະນາ
ຈຶ່ງຈະຮູ້ ເນື້ອເຣື້ອງ ຈິ່ງປະຕິບັດ
ຕາມເຖິດ ຄົງເກີດຜົນ ພົ້ນອະບາຍ ເອີຍ ...